ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ຫ້ອງການ

ເລກທີ 1176---- /ຫກ

ນະຄອນຫຼວງວຽງຈັນ, ວັນທີ 19 ມີນາ 2026

# ໜັງສືແຈ້ງເຊີນປະມູນເປີດກວ້າງພາຍໃນ

1. ກະຊວງສຶກສາທິການ ແລະ ກິລາ ຂໍຖືເປັນກຽດຮຽນເຊີນບັນດາບໍລິສັດ, ຫ້າງຮ້ານ ທີ່ສົນໃຈ ແລະ ມີຄຸນວຸດທິທີ່ເໝາະສົມ ເຂົ້າຍື່ນຊອງປະມູນສໍາລັບສະໜອງປີ້ຍົນເດີນທາງໄປ-ກັບ ໃຫ້ຄະນະນໍາ, ຄູຝຶກ ແລະ ນັກກິລາທີມຊາດລາວ ເຂົ້າຮ່ວມແຂ່ງຂັນກິລາເອຊຽນເກມຫາດຊາຍ ຄັ້ງທີ 04 ທີ່ເມືອງຊັນຢາ ສປ ຈີນ ປະຈໍາປີ 2026. ໄລຍະເວລາການຈັດສົ່ງ ພາຍຫຼັງທີ່ເຊັນສັນຍາ.
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງພາຍໃນ ທີ່ໄດ້ກໍານົດໄວ້ໃນ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງ ປະຕິບັດກົດໝາຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສາມາດເຂົ້າຮ່ວມແຂ່ງຂັນປະມູນໄດ້;
4. ບໍລິສັດ ທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນ ແລະ ເຂົ້າເບິ່ງເອກະສານປະມູນທີ່ ພະແນກຄຸ້ມຄອງຊັບສິນຂອງລັດ, ກົມການເງິນ, ກະຊວງສຶກສາທິການ ແລະ ກິລາ ໂທລະສັບ/ແຟັກ: 021252994; 021 217 206 ຕາມວັນເວລາ ລັດຖະການ;
5. ເອກະສານປະມູນຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ ໂດຍຜູ້ທີ່ສົນໃຈປະມູນ ຍື່ນໜັງສືສະເໜີຫາ ຫຼື ສາມາດສອບຖາມລາຍລະອຽດໄດ້ທີ່ ພະແນກຄຸ້ມຄອງຊັບສິນຂອງລັດ, ກົມການເງິນ, ກະຊວງສຶກສາທິການ ແລະ ກິລາ, ຖະໜົນເລກ 1 ລ້ານຊ້າງ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ໂທລະສັບ/ແຟັກ: 021 252994, 021 217 206, ເລີ່ມແຕ່ວັນທີ 19 ມີນາ 2026 ຕາມວັນເວລາລັດຖະການ, ໃນລາຄາ 1,000,000 ກີບ; ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ ແລະ ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມ 304 ຊັ້ນ 03 (ຕຶກກິລາເຈົ້າອານຸວົງ) ກະຊວງສຶກສາທິການ ແລະ ກິລາ ກ່ອນເວລາ 10:00 ໂມງ ຂອງ ວັນທີ 10 ເມສາ 2026. ຈະບໍ່ອະນຸຍາດສົ່ງຊອງປະມູນມາທາງເອເລັກໂຕຼນິກ, ຊອງປະມູນທີ່ສົ່ງຊ້າກ່ອນເວລາທີ່ກໍານົດໄວ້ ຈະບໍ່ຮັບເອກສານປະມູນ ແລະ ສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 10:00 ໂມງ ຂອງວັນທີ 10 ເມສາ 2026 ໂດຍຊ່ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າການຄໍ້າປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນມາພ້ອມ.

ຫົວໜ້າຫ້ອງການ

ຮສ. ປອ. ຫຼາວັນ ວົງຄໍາຊານ